ວາລະສານວິທະຍາສາດການເມືອງ-ການປົກຄອງ
www.jnappa.lci.la; ISSN: 3107-1163; E-ISSN: 3107-1171
DOI:https://doi.org/10.71026/jnappa.2026.010101



ພັກປະຊາຊົນປະຕິວັດລາວ ກຳອຳນາດນຳພາພາລະກິດປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການ ເດີນຕາມທິດກ້າວຂຶ້ນສັງຄົມນິຍົມ

The Lao People's Revolutionary Party is in power and leading the comprehensive reform process with principles in the socialist path

ນ. ຈັນສຸລິນ ອິນຄຳແສງ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.
E - mail: chansoulinhi@yahoo.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 30 ພຶດສະພາ 2025
ໄດ້ຮັບພາຍຫຼັງປັບປຸງ: 10 ກັນຍາ 2025
ຖືກຮັບຮອງ:15 ຕຸລາ 2025
ຈັດພິມອອນລາຍ: 18 ມີນາ 2026

ບົດຄັດຫຍໍ້:

ພັກປະຊາຊົນປະຕິວັດລາວ ໄດ້ນຳພາປະຊາຊົນເຮັດໜ້າທີ່ການປະຕິວັດຊາດປະຊາທິປະໄຕ ຕໍ່ສູ້ປົດປ່ອຍຊາດໄດ້ຢ່າງສຳເລັດຜົນ ແລະ ໄດ້ປະກາດສ້າງຕັ້ງປັນປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ ວັນທີ 2 ທັນວາ 1975 ເປັນຕົ້ນມາ, ເຮັດໃຫ້ພັກປະຊາຊົນປະຕິວັດລາວ ກາຍເປັນພັກກຳອຳນາດ ມີໜ້າທີ່ປົກປັກຮັກສາ ແລະ ສ້າງພັດທະນາປະເທດຊາດເດີນຕາມເສັ້ງທາງສັງຄົມນິຍົມ ຊຶ່ງແມ່ນໄລຍະດັດສ້າງ ແລະ ກໍ່ສ້າງສັງຄົມໃໝ່ ເພື່ອປົກປັກຮັກສາໝາກຜົນທີ່ການປະຕິວັດຍາດມາໄດ້. ຜ່ານໄລຍະການຈັດຕັ້ງປະຕິບັດ 2 ໜ້າທີ່ຍຸດທະສາດ ໂດຍໄດ້ວາງນະໂຍບາຍເສດຖະກິດ ຕາມແບບແຜນການລວມ ແລະ ນຳໃຊ້ກົນໄກແບບບໍລິຫານເກົ້ອກູນ ແຕ່ປີ 1975-1986 ເຫັນວ່າ ມີຫຼາຍບັນຫາບໍ່ສອດຄ່ອງກັບເງື່ອນໄຂໃໝ່, ພັກປະຊາຊົນປະຕິວັດລາວ ໄດ້ນຳພາພາລະກິດປ່ຽນແປງໃໝ່ ດຳເນີນໄປຢ່າງຮອບດ້ານ ຄື: ດ້ານເສດຖະກິດ, ການເມືອງ, ວັດທະນະທຳ, ສັງຄົມ, ດ້ານຄວາມຮູ້ ແນວຄິດ, ການຈັດຕັ້ງ ແລະ ແບບແນວທີ ເຮັດວຽກ ໂດຍມີການຊັ່ງຊາການພົວພັນລະຫວ່າງການເມືອງກັບເສດຖະກິດ. ພ້ອມກັນນັ້ນ, ພັກໄດ້ວາງ 6 ຫຼັກການ ແຫ່ງການປ່ຽນແປງໃໝ່ ໂດຍຍັງຍຶດໝັ້ນຈຸດໝາຍສັງຄົມນິຍົມ, ກຳແໜ້ນລັກສະນະຂອງການປະຕິວັດຢູ່ປະເທດເຮົາໃນໄລຍະໃໝ່ ໂດຍຍຶດໝັ້ນລັດທິມາກ-ເລນິນ ເປັນພື້ນຖານແນວຄິດຂອງພັກເຮົາ ແລະ ໝູນໃຊ້ຢ່າງປະດິດສ້າງ, ສອດ ຄ່ອງກັບຈຸດພິເສດຂອງປະເທດເຮົາ. ຜ່ານການນຳພາພາລະກິດປ່ຽນແປງໃໝ່ຮອບດ້ານ ຢ່າງມີຫຼັກການເດີນຕາມເສັ້ນທາງສັງຄົມນິຍົມສາມາດມີຜົນສຳເລັດ ຄື: ສາມາດຮັກສາສະຖານະເປັນແກນນຳໃນລະບົບການເມືອງ ແລະ ໄດ້ຮັບຄວາມໄວ້ວາງໃຈ ແລະ ຄວາມເຊື່ອໝັ້ນຈາກປະຊາຊົນ ; ໄດ້ນຳພາແກ້ໄຂຄວາມທຸກຍາກແລະ ພາປະເທດຊາດຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ; ໄດ້ນຳພາການຄຸ້ມຄອງດັດສົມ ແລະ ນຳໃຊ້ກົນໄກເສດຖະກິດຕະຫຼາດ ກໍ່ຄືຊຸກຍູ້ການເຕີບໂຕໃຫ້ມີຄວາມຕໍ່ເນື່ອງ, ມີຄຸນນະພາບ ແລະ ໄປຕາມທິດຍືນຍົງ; ໄດ້ສ້າງສັງຄົມສາມັກຄີປອງດອງ ແລະ ຄວາມເປັນປຶກແຜ່ນໃນທົ່ວປວງຊົນໃຫ້ໜັກແໜ້ນ; ມີການເປີດກວ້າງການພົວພັນຮ່ວມມືກັບພາຍນອກ ແລະ ການເຊື່ອມໂຍງກັບສາກົນໃຫ້ໄດ້ຢ່າງຕັ້ງໜ້າ.

ຄຳສັບສຳຄັນ : ພັກປະຊາຊົນປະຕິວັດລາວ, ພາລະກິດປ່ຽນແປງໃໝ່, ທິດສັງຄົມນິຍົມ,

Abstract:
The Lao People's Revolutionary Party successfully led the people to carry out the task of the national democratic revolution and the struggle for national liberation and declared the establishment of the Lao People's Democratic Republic on December 2nd, 1975. This made the Lao People's Revolutionary Party a ruling party with the task of protecting and developing the country along the socialist path, which was the period of adjustment and construction of a new society to preserve the results achieved by the revolution. Through the implementation of two strategic tasks, by setting economic policies according to the comprehensive plan and using the management mechanism from 1975 to 1986, it was seen that many problems were not in line with the new conditions. The Lao People's Revolutionary Party led the reform process and carried out comprehensively: in the economic, political, cultural, social, knowledge, ideology, organization and work methods, with a thorough understanding of the relationship between politics and the economy. At the same time, the Party has set six principles of reform, while still adhering to the socialist goal, grasping the characteristics of the revolution in our country in the new period, adhering to Marxism-Leninism as the ideological foundation of our Party and applying it creatively, in line with the special features of our country. By leading the comprehensive reform mission with principles and following the socialist path, we can achieve the following results: 1). We can maintain our status as the leading pillar in the political system and gain the trust and confidence of the people; 2). We have led the country to overcome poverty and graduate from the status of a least developed country; 3). We have led the management, adjustment and application of market economic mechanisms, as well as promoting continuous, quality and sustainable growth; 4). We have built a harmonious and harmonious society for all people; 5). We have actively expanded external cooperation and international integration.

Key words: Lao People's Revolutionary Party, New Direction, Socialist Path.

ພັກແມ່ນການຈັດຕັ້ງການເມືອງ ຂອງຊົນຊັ້ນໃດໜຶ່ງທີ່ແນ່ນອນ ຊຶ່ງປະກອບດ້ວຍບຸກຄົນທີ່ດີເດັ່ນ, ກ້າວໜ້າກວ່າໝູ່, ມີອຸດົມການທາງການເມືອງອັນໜຶ່ງອັນດຽວກັນ ແລະ ມີຄວາມຕື່ນຕົວສະໝັກໃຈເຂົ້າຮ່ວມການຈັດຕັ້ງພັກ ແລະ ເຄື່ອນໄຫວໄປຕາມແນວທາງປົກປ້ອງຜົນປະໂຫຍດຂອງຊົນຊັ້ນຕົນເອງ; ພັກການເມືອງກຳເນີດຂຶ້ນຈາກຄວາມຮຽກຮ້ອງຕ້ອງການຂອງການຕໍ່ສູ້ຊົນຊັ້ນ ຊຶ່ງທາດແທ້ຂອງການຕໍ່ສູ້ຊົນຊັ້ນ ແມ່ນການຕໍ່ສູ້ເພື່ອຍາດເອົາອຳນາດການປົກຄອງ ມາສູ່ກຳມືຂອງຕົນເອງ ແລະ ໃຫ້ພັກກາຍເປັນຜູ້ທີ່ມີຖານະນຳທາງດ້ານການເມືອງ ໃນຂອບເຂດທົ່ວປະເທດ. ການຕໍ່ສູ້ຍາດເອົາອຳນາດການປົກຄອງມາໃຫ້ຊົນຊັ້ນຕົນເອງ ແມ່ນຈຸດປະສົງສຸດທ້າຍຂອງພັກການເມືອງ ຊຶ່ງແມ່ນໜ້າທີ່ອັນສຳຄັນອັນດັບໜຶ່ງ ແລະ ຕົ້ນຕໍກວ່າໝູ່ໝົດ ແມ່ນບັນຫາອຳນາດການປົກຄອງ ແລະ ນຳໃຊ້ອຳນາດດັ່ງກ່າວ ເພື່ອປົກປ້ອງຜົນປະໂຫຍດຂອງຊົນຊັ້ນຕົນ. ດັ່ງນັ້ນ, ຈຶ່ງເຫັນໄດ້ວ່າພັກການເມືອງຍາມໃດກໍ່ມີທາດແທ້ຊົນຊັ້ນໃດໜຶ່ງ, ບໍ່ມີພັກການເມືອງໃດ ແລະເວລາໃດທີ່ພັກຈະຢູ່ເໜືອຊົນຊັ້ນ ຫຼື ປາສະຈາກລັກສະນະຊົນຊັ້ນ.

ພັກກຳອຳນາດ ແມ່ນຄວາມສຳນຶກໃຊ້ໃນວິທະຍາສາດການເມືອງ, ຊີ້ບອກເຖິງພັກການເມືອງໃດໜຶ່ງ ທີ່ຕາງໜ້າໃຫ້ຊົນຊັ້ນ, ສາມາດຍຶດໄດ້ອຳນາດ ແລະ ນຳພາອຳນາດການປົກຄອງ ເພື່ອຄຸ້ມຄອງບໍລິຫານປະເທດ ແນໃສ່ປະຕິບັດສິດຜົນປະໂຫຍດ ຂອງຊົນຊັ້ນຕົນເອງ. ດ້ານໜຶ່ງອີກ ພັກກຳອຳນາດແມ່ນຊີ້ບອກເຖິງບົດບາດຂອງພັກ ໃນເວລາທີ່ພັກຍາດໄດ້ອຳນາດການປົກຄອງ ແລະ ພັກຈຶ່ງຈະສາມາດນຳພາສັງຄົມ ໂດຍຜ່ານອຳນາດການປົກຄອງ, ແນວໂຮມແຫ່ງຊາດ ແລະ ບັນດາອົງການຈັດຕັ້ງສັງຄົມຕ່າງໆ. ໃນເມື່ອພັກການເມືອງໄດ້ກາຍເປັນເປັນພັກກຳອຳນາດແລ້ວ ບັນດາແຜນນະໂຍບາຍ, ແນວທາງຂອງພັກຈຶ່ງຈະສາມາດຫັນເປັນນະໂຍບາຍ, ກົດໝາຍ ແລະ ນິຕິກຳ ເພື່ອດັດປັບສາຍພົວພັນສັງຄົມ ໃຫ້ພົນລະເມືອງທຸກຄົນຕ້ອງໄດ້ເຄື່ອນໄຫວໄປຕາມແນວທາງນະໂຍບາຍ ແລະ ອຸດົມການຂອງພັກ.

ອີກປະການໜຶ່ງ ຄວາມສຳນຶກ ກ່ຽວກັບພັກກຳອຳນາດຄັ້ງທຳອິດແມ່ນ ອ.ອ ເລນິນ ໄດ້ຍົກຂຶ້ນມາ, ຕໍ່ມາປະທານ ໂຮ່ຈິມິນ ກໍ່ໄດ້ເວົ້າເຖິງບົດບາດກຳອຳນາດຂອງພັກ ຄື: ພັກກຳອຳນາດແມ່ນພັກຍາດໄດ້ອຳນາດການປົກຄອງ, ພັກກຳອຳນາດປົກຄອງ, ພັກນຳພາອຳນາດການປົກຄອງ. ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ, ທ່ານໄກສອນ ພົມວິຫານໄດ້ເວົ້າວ່າ: "ພັກເຮົາແມ່ນພັກໜຶ່ງທີ່ກຳອຳນາດ" ແລະ ຢູ່ໃນກົດລະບຽບພັກ ທີ່ກອງປະຊຸມໃຫຍ່ ຂອງພັກປະຊາຊົນປະຕິວັດລາວ ແຕ່ລະຄັ້ງຍັງສືບຕໍ່ຢືນຢັນວ່າ: "ປັດຈຸບັນພັກເຮົາແມ່ນພັກກຳອຳນາດ" ທັງໝົດນັ້ນ ໃຫ້ພວກເຮົາຮູ້ວ່າພັກປະຊາຊົນປະຕິວັດລາວ ແມ່ນພັກກຳ

ອຳນາດ. ໃນເງື່ອນໄຂພັກກອມມູນິດກຳອຳນາດການປົກຄອງ ມີຫຼາຍ ຈຸດພິເສດທີ່ຄອບງຳການເຄື່ອນໄຫວນຳພາ ແລະ ການດຳເນີນຊີວິດ ພາຍໃນພັກ, ໃນນັ້ນມີ 3 ຈຸດພິເສດຄື:

1). ໜ້າທີ່ການເມືອງຂອງພັກໄດ້ປ່ຽນແປງຢ່າງພື້ນຖານ, ໃນ ໄລຍະກ່ອນ ພັກມີໜ້າທີ່ການເມືອງນຳພາປະຊາຊົນບັນດາເຜົ່າ ເຮັດ ການປະຕິວັດຊາດປະຊາທິປະໄຕ ເພື່ອຕໍ່ສູ້ປົດປ່ອຍຊາດຕ້ານກັບຈັກ ກະພັດຕ່າງດ້າວ ແລະ ໂຄ່ນລົ້ມລະບອບເກົ່າ. ນັບແຕ່ວັນທີ 2 ທັນວາ 1975 ເປັນຕົ້ນມາ ພັກໄດ້ກາຍເປັນພັກກຳອຳນາດ ມີໜ້າທີ່ການ ເມືອງປົກປັກຮັກສາ ແລະ ສ້າງພັດທະນາປະເທດຊາດ ເດີນຕາມເສັ້ນ ທາງສັງຄົມນິຍົມ ຊຶ່ງແມ່ນໄລຍະດັດສ້າງ ແລະ ກໍ່ສ້າງສັງຄົມໃໝ່ ເພື່ອປົກປັກຮັກສາໝາກຜົນທີ່ການປະຕິວັດຍາດມາໄດ້. ອາດຈະເວົ້າ ໄດ້ວ່າ ແຕ່ກ່ອນໜ້າທີ່ແຖວໜ້າຂອງພັກ ແມ່ນໜ້າທີ່ຕໍ່ສູ້ທາງດ້ານ ການເມືອງ ແລະ ການທະຫານ, ແຕ່ປັດຈຸບັນນີ້ ແມ່ນເຮັດໜ້າທີ່ໃນ ການກໍ່ສ້າງ ແລະ ຂະຫຍາຍເສດຖະກິດ, ຕໍ່ສູ້ເພື່ອລຶບລ້າງຄວາມທຸກ ຍາກຫຼ້າຫຼັງ ຊຶ່ງແມ່ນພາລະກິດແຫ່ງການສືບຕໍ່ສ້າງ ແລະ ຂະຫຍາຍ ລະບອບປະຊາທິປະໄຕປະຊາຊົນ ພາຍໃຕ້ການນຳພາ ຂອງພັກປະຊາ ຊົນປະຕິວັດລາວ ແມ່ນພາລະກິດໃໝ່ອ່ຽມ ນັບທັງດ້ານທິດສະດີ ກໍ່ ຄື ດ້ານພຶດຕິກຳ ແລະ ເຕັມໄປດ້ວຍສິ່ງທ້າທາຍທົດສອບ ນານາປະການ.

2). ລະບົບການເມືອງມີການປ່ຽນແປງ, ພິເສດແມ່ນໄດ້ມີລັດ ປະຊາທິປະໄຕປະຊາຊົນ, ກຳລັງແຮງຂອງພັກກຳອຳນາດການ ປົກຄອງ ບໍ່ພຽງແຕ່ນອນຢູ່ໃນກຳລັງຂອງພັກເອງ ຫາກຍັງຢູ່ໃນກຳລັງ ແຮງສັງ ລວມ ຂອງລະບົບການເມືອງອີກດ້ວຍ, ໃນນັ້ນ ມີລັດເປັນ ແກ່ນສານ ໂດຍພາຍໃຕ້ການນຳຂອງພັກ. ການນຳຂອງພັກ ສະແດງ ອອກຢ່າງ ລວມສູນໂດຍຜ່ານລັດ, ລັດແມ່ນການຈັດຕັ້ງທີ່ສະແດງ ອອກຢ່າງ ລວມສູນ ເຖິງສິດອຳນາດຂອງປະຊາຊົນ, ມັນເປັນ ການຈັດຕັ້ງພື້ນ ຖານ ແລະ ຕົ້ນຕຳໃນການປະຕິບັດເຈດຈຳນົງ ແລະ ຜົນປະໂຫຍດຂອງປະຊາຊົນ, ປະຕິບັດສິດອຳນາດຂອງປະຊາຊົນ, ເປັນເຄື່ອງມືອັນສັກ ສິດ ເພື່ອຄຸ້ມຄອງສັງຄົມ ແລະ ຜະເດັດການກັບ ອິດທິກຳລັງປໍລະປັກ, ໃນເວລາມີອຳນາດປົກຄອງໃນກຳມືແລ້ວ ແມ່ນ ມີຂໍ້ສະດວກພື້ນຖານແຕ່ກໍ່ມີສິ່ງທ້າທາຍຫຼາຍອັນເກີດຂຶ້ນຢູ່ໃນ ພັກກຳອຳນາດ ເຊັ່ນ: ພະ ຍາດອາດຍາສິດ, ຫ່າງເຫີນມະຫາຊົນ, ສ ລາດບັງຫຼວງ, ກິນສິນບົນ... ດ້ວຍເຫດນັ້ນ ຕ້ອງມີມາດຕະການ ເດັດຂາດແກ້ໄຂປາກົດການເຫຼົ່ານັ້ນຢ່າງທັນການ.

3). ແບບວິທີນຳພາຂອງພັກ ໄດ້ມີການປ່ຽນແປງ. ເລນິນ ໄດ້ ຊີ້ບອກວ່າ: "ເມື່ອສະພາບການໄດ້ປ່ຽນແປງໄປແລ້ວ ແລະ ພວກເຮົາ ຕ້ອງໄດ້ແກ້ໄຂບັນດາໜ້າທີ່ ທີ່ແຕກຕ່າງກັນກັບເມື່ອກ່ອນນັ້ນ ບໍ່ຄວນ ອວ່າຍໜ້າຄືນຫຼັງ ແລະ ບໍ່ຄວນນຳໃຊ້ແບບວິທີເກົ່າໆຂອງມື້ຜ່ານມາ" (ອະລາດີເມຍ ອີລິດ, 1997, ໜ້າ 4).

ພັກກຳອຳນາດການປົກຄອງ ແລະ ນຳພາສ້າງລະບອບໃໝ່ໃນ ປັດຈຸບັນນີ້ ຮຽກຮ້ອງໃຫ້ພັກຕ້ອງປະດິດສ້າງນຳໃຊ້ວິທີການ ແລະຮູບ ການໃໝ່ ໃນການເຄື່ອນໄຫວນຳພາທີ່ອຸດົມສົມບູນ, ມີຊີວິດຊີວາ ສົມທົບໄດ້ ລະຫວ່າງ ການສຶກສາອົບຮົມການເມືອງແນວຄິດ ກັບການ ກະຕຸກຊຸກຍູ້ຜົນປະໂຫຍດດ້ານວັດຖຸ, ສົມທົບຢ່າງກົມກຽວ ລະ ຫວ່າງ ການສຶກສາອົບຮົມ ກັບການໃຊ້ລະບຽບກົດໝາຍ; ສົມທົບ ລະຫວ່າງ ວຽກງານແນວຄິດ ກັບວຽກງານຈັດຕັ້ງ, ວຽກງານເສດຖະ ກິດ. ພັກກຳອຳນາດ ແລະ ນຳພາພາລະກິດປ່ຽນແປງໃໝ່ຮອບດ້ານ ຢ່າງມີຫຼັກການ ເດີນຕາມທິດກ້າວຂຶ້ນສັງຄົມນິຍົມ ແມ່ນຄວາມຮຽກ ຮ້ອງຕ້ອງການພາວະວິໄສ ແລະ ຮີບດ່ວນສຳລັບພາລະກິດປົກປັກຮັກ ສາປະເທດຊາດ ແລະ ສ້າງສາລະບອບໃໝ່ຂອງພວກເຮົາ. ພັກເຮົາຖືວ່າ ການປ່ຽນແປງໃນເນື້ອແທ້ ແມ່ນການປະຕິວັດທີ່ມີລັກສະນະຮອບດ້ານ , ເລິກຊຶ້ງ ແລະ ຍາວນານ. ຍ້ອນແນວນັ້ນ, ພັກເຮົາ ຍາມໃດກໍ່ກຳແໜ້ນ ບັນດາທັດສະນະປະຕິວັດ ແລະ ໝູນໃຊ້ມັນເຂົ້າໃນພາກປະຕິວັດຕົວ ຈິງຂອງປະເທດຊາດຢ່າງຖືກຕ້ອງ, ບໍ່ຈືດກ່າຍ, ລອກແບບ, ຮັກສາ ເດີມ. ພວກເຮົາດຳເນີນການປ່ຽນແປງໃໝ່ ໂດຍຍຶດໝັ້ນໃນ 6 ຫຼັກການ ທີ່ມະຕິຄັ້ງທີ 8 ຂອງພັກໄດ້ວາງອອກ, ຍຶດໝັ້ນໃນຈຸດໝາຍ ແລະເສັ້ນ ທາງກ້າວເດີນ ຂອງການປະຕິວັດປະເທດເຮົາ.

ພັກນຳພາພາລະກິດການປ່ຽນແປງໃໝ່ ໄດ້ດຳເນີນໄປຢ່າງຮອບ ດ້ານ ຄື: ດ້ານເສດຖະກິດ, ການເມືອງ, ວັດທະນະທຳ, ສັງຄົມ, ດ້ານ ຄວາມຮູ້, ແນວຄິດ, ການຈັດຕັ້ງ ແລະ ແບບແນວທີເຮັດວຽກ ໂດຍມີ ການຊັ່ງຊາການພົວພັນ ລະຫວ່າງ ການເມືອງກັບເສດຖະກິດ; ໃນນັ້ນ, ຕ້ອງຖືສຳຄັນເປັນພິເສດ ໂດຍສະເພາະແມ່ນການປ່ຽນແປງໃໝ່ທາງ ດ້ານເສດຖະກິດ ແນໃສ່ຂະຫຍາຍການຜະລິດ, ປົດແປງຊີວິດການເປັນ ຢູ່ ຂອງປະຊາຊົນບັນດາເຜົ່າ. ພ້ອມກັນນັ້ນ, ກໍ່ຕ້ອງດຳເນີນການປ່ຽນ ແປງໃໝ່ທາງດ້ານການເມືອງເທື່ອລະກ້າວ ຊຶ່ງເນື້ອໃນອັນສຳຄັນແມ່ນ ເສີມຂະຫຍາຍປະຊາທິປະໄຕ ແນໃສ່ປຸກລະດົມສະຕິປັນຍາ, ຄວາມ ສາ ມາດ ແລະ ຫົວຄິດປະດິດສ້າງຂອງທົ່ວພັກ, ທົ່ວປວງຊົນ ເຂົ້າໃນ ການປົກປັກຮັກສາ ແລະ ສ້າງສາປະເທດຊາດ. ປ່ຽນແປງໃໝ່ ແມ່ນ ເພື່ອປັບປຸງບູລະນະອັນທີ່ບໍ່ທັນຄັກບໍ່ທັນແໜ່, ເສີມຂະຫຍາຍຈຸດດີ, ດັດແປງແກ້ໄຂຂໍ້ຜິດພາດ, ຈຸດບົກພ່ອງ, ສືບທອດມູນມັງອັນລ້ຳຄ່າ ແລະ ມູນ ເຊື້ອການຕໍ່ສູ້ປະຕິວັດຂອງພັກເຮົາ. ປ່ຽນແປງໃໝ່ ບໍ່ໝາຍ ເຖິງວ່າຕ້ອງປ່ຽນປຶ້ນ ຫຼື ປະຕິເສດທຸກສິ່ງທຸກຢ່າງ, ມະລຸ້ມມະລ້ອຍໃນ

ທັດສະນະການຈຳແນກມິດ-ສັດຕູ, ຫາກເຮັດຄືແນວນັ້ນ ກໍ່ມີແຕ່ນຳ ເອົາຜົນເສຍຫາຍມາໃຫ້ແກ່ປະຊາຊົນ, ແກ່ການປະຕິວັດ, ນຳຜົນດີ ມາໃຫ້ຝ່າຍຕ້ານການປະຕິວັດປະເທດເຮົາ. ພັກກຳອຳນາດ ນຳພາ ຂະບວນວິວັດການປ່ຽນແປງໃໝ່ ແນໃສ່ຍົກສູງຄຸນນະພາບການ ນຳພາຂອງພັກ, ຄວາມສັກສິດແຫ່ງການຄຸ້ມຄອງຂອງລັດ ແລະ ເສີມ ຂະຫຍາຍສິດເປັນເຈົ້າຂອງປະຊາຊົນຢ່າງບໍ່ຢຸດຢັ້ງ. ການປ່ຽນແປງໃ ໝ່ ຕ້ອງດຳເນີນໄປເປັນແຕ່ລະບາດກ້າວທີ່ເໝາະສົມ, ໜັກແໜ້ນ ແລະ ຕ້ອງມີການກະກຽມປັດໄຈພື້ນຖານອັນຈຳເປັນ, ຕ້ອງຄຳນຶງ ເຖິງຜົນປະໂຫຍດສະເພາະໜ້າ ແລະຍາວນານ, ບໍ່ຄວນເຮັດແບບ ງ່າຍດາຍ, ຜິວເຜີນ, ເພື່ອຮັບປະກັນຜົນສຳເລັດ ຂອງການປ່ຽນແປງ ເພື່ອກ້າວຂຶ້ນຕາມທິດສັງຄົມນິຍົມຢ່າງໜັກແໜ້ນ.

ພາຍຫຼັງຢຶດອຳນາດການປົກຄອງທົ່ວປະເທດ ປີ 1975, ພັກ ປະ ຊາຊົນປະຕິວັດລາວ ໄດ້ກາຍມາເປັນພັກກຳອຳນາດ, ເປັນຜູ້ຈັດ ຕັ້ງນຳ ພາທົ່ວສັງຄົມ. ນີ້ເປັນບາດລ້ຽວປະຫວັດສາດທີ່ສຳຄັນ, ເປັນ ຂີດໝາຍ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງພັກເຮົາ, ມັນແມ່ນ ພາລະກຳປະ ຫວັດສາດຂອງພັກທີ່ປະເທດຊາດ ແລະ ປະຊາຊົນ ມອບໝາຍໃຫ້. ເພື່ອເຮັດຫຼ້ອນພາລະກຳປະຫວັດສາດດັ່ງກ່າວ, ພັກ ເຮົາໄດ້ຖືເປັນສຳຄັນ ແລະ ໄດ້ເອົາໃຈໃສ່ເປັນພິເສດ ຕໍ່ວຽກງານ ກໍ່ສ້າງພັກ. ກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ5ນ ທີ 4 ມັງກອນ 1978 ໄດ້ວາງໜ້າທີ່ ແລະ ທິດນຳຂອງການກໍ່ສ້າງພັກໃນ ໄລຍະໃໝ່ຄືດັ່ງນີ້:

- ການກໍ່ສ້າງພັກ ຕ້ອງເລີ່ມຈາກໜ້າທີ່ການເມືອງ ແລະ ແນ ໃສ່ເຮັດສຳເລັດໜ້າທີ່ການເມືອງຂອງພັກ.

- ຕ້ອງເພີ່ມທະວີລັກສະນະຊົນຊັ້ນກຳມະກອນ ຂອງພັກຢູ່ ສະເໝີ.

- ຕ້ອງສ້າງພັກໃຫ້ໜັກແໜ້ນ, ເຂັ້ມແຂງ ທັງສາມດ້ານ:ການ ເມືອງ, ແນວຄິດ ແລະ ການຈັດຕັ້ງ.

- ຕ້ອງດຳເນີນການກໍ່ສ້າງພັກ ຕິດພັນກັບການກໍ່ສ້າງອຳນາດ ການປົກຄອງ ແລະ ຂະບວນການມະຫາຊົນ.

- ເພີ່ມທະວີການບຳລຸງ ແລະ ກໍ່ສ້າງບຳລຸງຖັນແຖວພະນັກ ງານ, ຂະຫຍາຍຮາກຖານພັກ, ຕອບສະໜອງຄວາມຮຽກຮ້ອງຕ້ອງ ການ ຂອງໜ້າທີ່ການເມືອງຂອງພັກ ໃນໄລຍະໃໝ່.

ໂດຍເລີ່ມຈາກບັນດາທັດສະນະພື້ນຖານທີ່ກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກວາງອອກ ແລະ ການໝູນໃຊ້ແນວຄິດຂອງເລນິນ ວ່າດ້ວຍນະໂຍບາຍເສດຖະກິດໃໝ່ ເຂົ້າໃນສະພາບການຕົວຈິງຂອງ ການປະຕິວັດລາວ, ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 5-6-7 ສະໄໝທີ IVໄດ້ເຮັດໃຫ້ແນວທາງປ່ຽນແປງໃໝ່ຂອງພັກ ເຮົາເປັນອັນລະອຽດ, ຈະແຈ້ງ ແລະ ເປັນລະບົບຄົບຊຸດ. ບັນດາມະຕິ ຂອງຄະນະບໍລິຫານງານສູນກາງພັກ ໄດ້ເນັ້ນໜັກບາງຈຸດໝາຍທີ່ຕ້ອງ ສູ້ຊົນໃຫ້ໄດ້ຄື: ຫັນທຸກການເຄື່ອນໄຫວເສດຖະກິດ ແລະ ການຄຸ້ມ ຄອງຂອງລັດ ໄປສູ່ກົນໄກໃໝ່ຢ່າງຂາດຂັ້ນ, ຫັນໄປສູ່ຊົນນະບົດ, ຂຶ້ນ ໄປເຂດພູດອຍ ແລະ ຫັນລົງຮາກຖານຢ່າງແຂງແຮງ. ພ້ອມກັນນັ້ນ ກໍ່ ປະຕິບັດນະໂຍບາຍ ເປີດກວ້າງການພົວພັນກັບຕ່າງປະເທດເພື່ອດຶດ ດຶງ ແລະ ນຳໃຊ້ແຫຼ່ງທຶນຮອນ, ເຕັກນິກ ກໍ່ຄືບົດຮຽນຈາກຕ່າງປະເທດ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ຕາມທິດ ນຳ “ທັງເປີດປະຕູໄດ້ດີ, ທັງເປັນເຈົ້າໄດ້ດີ, ທັງຮັບປະ ກັນປ້ອງ ກັນຊາດ-ປ້ອງກັນຄວາມສະຫງົບໄດ້ດີ, ທັງປ້ອງກັນພາຍໃນໄດ້ດີ”. ພ້ອມກັນນັ້ນ, ສະພາປະຊາຊົນສູງສຸດກໍ່ໄດ້ຮັບຮອງ ແລະປະກາດໃຊ້ ກົດໝາຍຈຳນວນໜຶ່ງ.

ເພື່ອຮັບປະກັນໃຫ້ພາລະກິດປ່ຽນແປງໃໝ່ ກ້າວໄປສູ່ຈຸດໝາຍ , ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 ສະໄໝທີ IV ກໍ່ໄດ້ວາງ 6 ຫຼັກການ ຂອງການປ່ຽນແປງໃໝ່ ຄື:

“ຫຼັກການທີ 1: ຢຶດໝັ້ນຈຸດໝາຍສັງຄົມນິຍົມ, ກຳແໜ້ນ ລັກສະນະ ຂອງການປະຕິວັດຢູ່ປະເທດເຮົາ ໃນໄລຍະໃໝ່.

ຫຼັກການທີ 2: ຢຶດໝັ້ນລັດທິມາກ-ເລນິນ ເປັນພື້ນຖານແນວ ຄິດຂອງພັກເຮົາ ແລະ ໝູນໃຊ້ຢ່າງປະດິດສ້າງ, ສອດຄ່ອງກັບຈຸດພິ ເສດຂອງປະເທດເຮົາ.

ຫຼັກການທີ 3: ຢຶດໝັ້ນໃນການນຳພາຂອງພັກ, ເພີ່ມທະວີ ຄວາມສາມັກຄີເປັນເອກະພາບພາຍໃນພັກ ບົນພື້ນຖານຫຼັກການ ລວມສູນປະຊາທິປະໄຕ ແລະ ແນວທາງຂອງພັກ.

ຫຼັກການທີ 4: ເຊີດຊູ ແລະ ເສີມຂະຫຍາຍປະຊາທິປະໄຕ ບົນ ພື້ນຖານຫຼັກການລວມສູນປະຊາທິປະໄຕ ເອົາປະຊາຊົນເປັນກົກ ພາຍ ໃຕ້ການນຳພາຂອງພັກ.

ຫຼັກການທີ 5: ເພີ່ມທະວີກຳລັງແຮງ ແລະ ຄວາມສັກສິດ ຂອງ ລະບົບອຳນາດປະຊາທິປະໄຕປະຊາຊົນ ອີງໃສ່ກຳລັງແຮງຂອງ ປະຊາຊົນ ແລະ ເພື່ອປະຊາຊົນ, ຕ້ານປາກົດການພະຍາດອາຍາສິດທຸກ ຮູບແບບ.

ຫຼັກການທີ 6: ເຊີດຊູຈິດໃຈເອກະລາດເປັນເຈົ້າຕົນເອງ, ສົມ ທົບກຳລັງແຮງ ຂອງຍຸກສະໄໝ” (ຄະນະໂຄສະນາອົບຮົມສູນກາງພັກ, 1997, ໜ້າ 6].

ຄຽງຄູ່ກັບ 6 ຫຼັກການຂ້າງເທິງນັ້ນ, ພັກເຮົາຍັງໄດ້ຍ້ຳຕື່ມ: ຕ້ານ ແນວຄິດມະລຸ້ມມະລ້ວຍຂາດຫຼັກໝັ້ນຊົນຊັ້ນ, ບໍ່ເຫັນແຈ້ງທາດແທ້

ຂອງລັດທິຈັກກະພັດນິຍົມ ແລະ ອິດທິກຳລັງປໍລະປັກ; ຕ້ານແນວຄິດຫຼາຍເຄົ້າ, ຫຼາຍພັກ; ຕ້ານແນວຄິດເສລີປະຊາທິປະໄຕແບບນາຍທຶນ, ການເປີດເຜີຍ ແລະ ປະຊາທິປະໄຕແບບບໍ່ມີຫຼັກການ, ບໍ່ມີການຈັດຕັ້ງລະບຽບວິໄນ ເປັນອານາທິປະໄຕ; ຕ້ານການຮັກສາເດີມ, ອັດຕະວິໄສ, ຮ້ອນຮົນ, ລອກແບບ, ຂາດຄວາມປະດິດສ້າງໃນການໝູນໃຊ້ລັດທິມາກ-ເລນິນ ເຂົ້າໃນສະພາບຕົວຈິງຂອງປະເທດ; ຕ້ານລັດທິສອຍໂອ ກາດ, ຂວາຈັດ, ຢາກດັດແກ້ລັດທິມາກ-ເລນິນ ແລະ ຕ້ານແບບແຜນອາດຍາສິດ, ຜະເດັດການອ້າຍດຽວ, ຫ່າງເຫີນຈາກມະຫາຊົນ ບໍ່ໃກ້ຊິດ ຕິດແທດປະຊາຊົນ, ບໍ່ຢາກລົງຮາກຖານ ແລະຊົນນະບົດ, ບໍ່ຢາກຂຶ້ນໄປເຂດພູດອຍຫ່າງໄກສອກຫຼີກ.

ມາຮອດກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ຍັງໄດ້ຢັ້ງຢືນເຖິງການສືບຕໍ່ດຳເນີນພາລະກິດປ່ຽນແປງໃໝ່ຮອບ ດ້ານ ຢ່າງມີຫຼັກການຂອງພັກ ວ່າ: “ຍຶດໝັ້ນໃນແນວທາງປ່ຽນແປງ ໃໝ່ ໄປພ້ອມກັບການຕ້ານລັດທິຄຳພີ, ຮັກສາເດີມ, ກໍ່ຄືແນວຄິດອັດ ຕະວິໄສ, ຮ້ອນຮົນ, ບໍ່ກຳແໜ້ນ ສະພາບຄວາມເປັນຈິງ ແລະ ຫຼັກການປ່ຽນແປງໃໝ່; ຍົກສູງຄຸນທາດ ການເມືອງ ແລະ ລະດັບຄວາມຮູ້ຄວາມສາມາດຂອງສະມາຊິກພັກ ຂຶ້ນຕື່ມອີກ, ເຮັດໃຫ້ທົ່ວພັກມີຄວາມເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມ, ບໍ່ຫວັ່ນໄຫວຄອນແຄນຕໍ່ການທ້າທາຍທົດສອບໃດໆ” (ວາລະສານ ອາລຸນໃໝ່, 2011, ໜ້າ 7]. ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ມີການປະເມີນຜົນຂອງການສ້າງບັນດາປະຖົມປັດໄຈໃຫ້ແກ່ການກ້າວຂຶ້ນສັງຄົມນິຍົມ ຕາມແນວທາງປ່ຽນແປງໃໝ່ ຈົນເຖິງປັດຈຸບັນ ມີເນື້ອໃນລະ ອຽດ ຄື:

1). ການກໍ່ສ້າງພັກ ແລະ ປັບປຸງພັກ: ພັກເຮົາໃນຖານະທີ່ເປັນພັກກຳອຳນາດ ໂດຍລວມສາມາດກຳນົດແນວທາງການເມືອງ ແລະການຈັດຕັ້ງອັນເປັນພື້ນຖານຖືກຕ້ອງ, ໄດ້ຮັບການປັບປຸງດ້ານການຈັດຕັ້ງໃຫ້ເປັນລະບົບທົ່ວເຖິງທຸກຂົງເຂດແຕ່ເທິງລົງລຸ່ມ; ຖັນແຖວສະມາຊິກພັກຜູ້ມີລະດັບການສຶກສາສູງ ທີ່ກວມອັດຕາສ່ວນຕົ້ນຕໍ ໄດ້ກາຍເປັນກຳລັງທາງດ້ານການເມືອງ ແລະ ສະຕິປັນຍາ ທີ່ສ້າງພື້ນຖານໃຫ້ພັກ ຍົກສູງຄວາມສາມາດໃນການກຳອຳນາດ ເປັນຄັນທຸງເຕົ້າໂຮມຄວາມສາມັກຄີປອງດອງ ແລະ ຄວາມເປັນປຶກແຜ່ນຂອງຊາດ. ເຖິງຢ່າງໃດກໍ່ຕາມ, ຄວາມສາມາດໃນການຄົ້ນຄ້ວາ, ປະດິດສ້າງທິດສະດີຈາກພຶດຕິກຳ ເພື່ອເປັນພື້ນຖານໃຫ້ແກ່ການຊີ້ນຳແກ້ໄຂບັນຫາຕົວຈິງຂອງພັກ ຍັງຈຳກັດ; ຄວາມເຂົ້າໃຈຕໍ່ການນຳພາ-ຊີ້ນຳຜັນຂະ ຫຍາຍບັນດາມະຕິ, ຄຳສັ່ງຂອງພັກ ຜ່ານອຳນາດລັດ ຍັງມີລັກສະນະຄຸມເຄີອ; ກົນໄກປະຕິບັດປະຊາທິປະໄຕ ແລະ ການຄຸ້ມຄອງດ້ານລະບຽບວິໄນ ຢູ່ພາຍໃນພັກ ຍັງບໍ່ທັນເປັນລະບົບ, ເຂັ້ມແຂງ ແລະ ເຂັ້ມງວດເທົ່າທີ່ຄວນ.

2). ການສ້າງ, ປັບປຸງອຳນາດລັດ ແລະການສ້າງລະບົບກົດໝາຍ: ອຳນາດລັດປະຊາທິປະໄຕປະຊາຊົນຂອງພວກເຮົາ ໄດ້ຮັບການກໍ່ສ້າງ ,ປັບປຸງ ແລະ ບູລະນະມາຕະຫຼອດ ດ້ານສາຍໃຍການຈັດຕັ້ງ, ການວາງພື້ນຖານດ້ານກົດໝາຍ ແລະ ນິຕິກຳອັນຈຳເປັນ ໄປຄຽງຄູ່ກັບການບຳລຸງສ້າງບຸກຄະລາກອນ ເພື່ອບໍລິຫານອົງການຈັດຕັ້ງແຕ່ລະພາກສ່ວນ ສາມາດເຮັດໃຫ້ອຳນາດລັດປະຊາທິປະໄຕປະຊາຊົນ ກາຍເປັນເຄື່ອງມືອັນປະເສີດ ໃນການປົກປ້ອງໝາກຜົນຂອງການປະຕິວັດ ແລະ ກໍ່ສ້າງລະບອບໃໝ່ ທີ່ເປັນປັດໄຈຄ້ຳປະກັນໂດຍກົງ ໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ເສດຖະກິດ-ສັງຄົມຂອງຊາດ ມີການຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ທັງຮັບປະກັນການເຄື່ອນໄຫວວຽກງານການຕ່າງປະເທດຢ່າງໜັກແໜ້ນ ຕາມແນວທາງຂອງພັກ. ບັນຫາທີ່ມີຄວາມຈຳເປັນຕ້ອງປັບປຸງແມ່ນສະພາບຄວາມຊ້ຳຊ້ອນ ດ້ານການຈັດຕັ້ງ-ພາລະບົດບາດ, ກົງຈັກໃຫຍ່ໂຕ, ມີຂອດບໍລິຫານ ແລະ ສາຍງານທີ່ບໍ່ຈຳເປັນຫຼາຍ, ກົນໄກການບັງຄັບໃຊ້ກົດໝາຍບໍ່ເຂັ້ມແຂງ, ຄວາມໂປ່ງໃສໃນການຄຸ້ມຄອງບໍລິຫານຍັງຕ່ຳ... ຍັງເປັນບັນຫາຊໍ້າເຮື້ອແກ່ຍາວ, ເຮັດໃຫ້ປະສິດທິພາບໃນການຄຸ້ມຄອງຍັງບໍ່ທັນສູງ; ການປະຕິບັດສິດທິ - ຜົນປະໂຫຍດຂອງພົນລະເມືອງ ຕາມລັດຖະທຳມະນູນ ແລະ ກົດໝາຍ ຍັງມີອຸປະສັກບໍ່ໜ້ອຍ.

3). ການສ້າງພື້ນຖານວັດຖຸ-ເຕັກນິກ ແລະ ການສ້າງເສດຖະກິດແຫ່ງຊາດ: ຜົນສຳເລັດອັນໃຫຍ່ຫຼວງ ທີ່ບັນລຸໄດ້ໃນການພັດທະນາດ້ານພື້ນຖານໂຄງລ່າງ ບໍ່ສະເພາະແຕ່ກາຍເປັນປັດໄຈພື້ນຖານໃຫ້ແກ່ການພັດທະນາ ແລະ ເສີມຂະຫຍາຍບັນດາທ່າແຮງບໍ່ມຊ້ອນຢູ່ພາຍໃນປະເທດ, ຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນຢ່າງບໍ່ຢຸດຢັ້ງເທົ່ານັ້ນ ຫາກຍັງສ້າງຄວາມສາມາດຕົວຈິງ ໃຫ້ປະເທດເຮົາເຊື່ອມຈອດກັບບັນດາປະເທດໃກ້ຄຽງ ແລະ ເຊື່ອມໂຍງເສດຖະກິດພາກພື້ນ; ຂະແໜງ ອຸດສາຫະກຳພະລັງງານ-ບໍ່ແຮ່, ພື້ນຖານໂຄງລ່າງ ຂອງຂະແໜງກະສິກຳ-ປ່າໄມ້ທີ່ມີແລ້ວ ກໍ່ຄືການນຳໃຊ້ຜົນສຳເລັດດ້ານວິທະຍາສາດ-ເຕັກໂນໂລຊີ ເຂົ້າໃນການຜະລິດ, ການບໍລິການ ແລະ ການຄຸ້ມຄອງລັດ... ໄດ້ກາຍເປັນພື້ນຖານອັນສຳຄັນໃຫ້ປະເທດເຮົາ ສືບຕໍ່ກ້າວສູ່ລະດັບການພັດທະນາໃໝ່ໃນຊຸມປີຕໍ່ໜ້າ. ແຕ່ຕ້ອງຍອມຮັບວ່າລາວເຮົາຍັງເປັນສັງຄົມບໍລິໂພກທີ່ເພິ່ງພາພາຍນອກເປັນຕົ້ນຕໍ, ເປັນພື້ນຖານເສດຖະກິດຂາດດຸນຊໍ້າລະສະສາງສາກົນທີ່ຮ້າຍແຮງ;ໃນນັ້ນ, ການປະກອບອາຊີບຕົ້ນຕໍ ຂອງປະຊາຊົນສ່ວນໃຫຍ່ ແມ່ນການຜະລິດກະສິກຳ ທີ່ຂຶ້ນກັບປັດໄຈທາງທຳມະຊາດເປັນຫຼັກ, ການນຳໃຊ້ຜົນສຳເລັດດ້ານວິ

ທະ ຍາສາດ-ເຕັກນິກ, ນະວັດຕະກຳໃໝ່ຍັງຈຳກັດ, ການຜະລິດຍັງ ກະແຈກ ກະຈາຍ ແລະ ສະມັດຕະພາບຍັງຕ່ຳ, ບໍ່ທັນມີອຸດສາຫະກຳ ປຸງແຕ່ງກະສິ ກຳທີ່ເປັນຕົນເປັນໂຕ; ການເຕີບໂຕເສດຖະກິດ ຕົ້ນຕໍ ຍັງມາຈາກປັດໄຈການຂຸດຄົ້ນຊັບພະຍາກອນທຳມະຊາດ, ບັນດາ ທ່າແຮງບໍ່ມຊ້ອນ ອື່ນໆຂອງຊາດ ບໍ່ທັນໄດ້ຮັບການພັດທະນາ ແລະ ເສີມຂະຫຍາຍຢ່າງແຂງແຮງ, ສົມເຫດສົມຜົນ. ວິສາຫະກິດຢູ່ພາຍ ໃນປະເທດຍັງອ່ອນ ແອ ແລະ ບໍ່ທັນມີຖານອັນໝັ້ນຄົງ ເພື່ອສ້າງ ຄວາມສາມາດແຂ່ງຂັນກັບວິສາຫະກິດຂອງລັດ ກໍ່ຍັງບໍ່ສາມາດ ຮັກສາບົດບາດເປັນເຈົ້າພາທາງ ທັງໃນດ້ານການສ້າງມູນຄ່າຜະລິດຕະ ພັນ, ປະສິດທິພາບຂອງການຈັດຕັ້ງ-ຄຸ້ມຄອງ ແລະ ການນຳໃຊ້ ຜົນສຳເລັດຂອງວິທະຍາສາດ-ເຕັກໂນໂລຊີ. ເສດຖະກິດມະຫາພາກ ບໍ່ທັນສາມາດເສີມຂະຫຍາຍບົດບາດການດັດສົມອັນແຂງແຮງ ຕໍ່ ພື້ນຖານເສດຖະກິດແຫ່ງຊາດ, ການສ້າງລະບອບເສດຖະກິດ ຕະຫຼາດ ຕາມທິດສັງຄົມນິຍົມ ຍັງບໍ່ທັນປາກົດຕົວຢ່າງຈະແຈ້ງ.

4). ການສ້າງຄວາມສາມັກຄີປອງດອງລະຫວ່າງເຜົ່າ ແລະ ຊັ້ນຄົນ: ຄວາມສາມັກຄີປອງດອງ ລະຫວ່າງເຜົ່າ ແລະ ຊັ້ນຄົນຢູ່ ປະເທດເຮົາ ໄດ້ຮັບການເພີ່ມທະວີໃຫ້ເປັນປຶກແຜ່ນແໜ້ນໜາ ບົນ ພື້ນຖານການຮັບປະກັນຄວາມສະເໝີພາບດ້ານການເມືອງ, ການຜູກ ພັນດ້ານສິດທິ-ຜົນປະໂຫຍດ, ຄວາມເຈືອຈານໃນການດຳລົງຊີວິດ ແລະການທຳມາຫາກິນ ກໍ່ຄືການເຊີດຊູຄຸນຄ່າທາງວັດທະນະທຳ ຮ່ວມກັນ... ຊຶ່ງບໍ່ສະເພາະແຕ່ໄດ້ຖືກຮັບປະກັນດ້ວຍລັດຖະທຳ ມະນູນ ແລະ ກົດໝາຍ ຫາກຍັງຜ່ານການສ້າງ, ປັບປຸງເງື່ອນໄຂ ແລະ ສະພາບແວດລ້ອມ ໃນການປະຕິບັດຕົວຈິງຢ່າງບໍ່ຢຸດຢັ້ງ. ແຕ່ຄວາມ ຫຼຸດໂຕກັນໃນການພັດທະນາ ລະຫວ່າງ ຕົວເມືອງ ແລະ ຊົນນະບົດ, ທົ່ງພຽງ ແລະເຂດພູດອຍ ໄດ້ເຮັດໃຫ້ໂອກາດໃນການເຂົ້າເຖິງການ ບໍລິການສາທາ ລະນະ ກໍ່ຄືການເຂົ້າເຖິງການສຶກສາຂັ້ນສູງ ຂອງລູກ ຫຼານປະຊາຊົນບັນດາເຜົ່າຢູ່ຊົນນະບົດຍັງຈຳກັດ, ການແກ້ໄຂຂາດ ແຫຼ່ງພະນັກງານນຳພາຄຸ້ມຄອງ ແລະ ພະນັກງານວິຊາການທີ່ເປັນຄົນ ຊົນເຜົ່າ ຍັງບໍ່ທັນປະຕິບັດໄດ້ດີເທົ່າທີ່ຄວນ.

5). ການສ້າງຊັບພະຍາກອນມະນຸດ: ພວກເຮົາສາມາດບັນລຸ ດັດສະນີທີ່ວໄປ ກ່ຽວກັບການພັດທະນາຊັບພະຍາກອນມະນຸດ ໃນ ມາດຕະຖານຂອງບັນດາປະເທດ ທີ່ພົ້ນອອກຈາກສະຖານະພາບ ດ້ອຍພັດທະນາ, ຖົນແຖວປັນຍາຊົນ, ຊ່ຽວຊານດ້ານຕ່າງໆ ກໍ່ຄືແຮງ ງານທີ່ໄດ້ຮັບການຝຶກສີມືເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ ແລະ ຈະສາມາດ ເປັນພື້ນ ຖານສຳຄັນ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງ ຊາດ ໃນຊຸມປີຕໍ່ໜ້າ. ແຕ່ສິ່ງທີ່ຕ້ອງໄດ້ຮັບປຸງແກ້ໄຂແມ່ນການ ພັດທະນາຊັບ ພະຍາກອນມະນຸດ, ໃນໄລຍະຜ່ານມາ ຍັງບໍ່ທັນມີ ລັກສະນະຄົບຊຸດ ໂດຍສະເພາະການກໍ່ສ້າງຖົນແຖວວິຊາການເຕັກນິກ ສະເພາະດ້ານໃນຂົງເຂດວິສະວະກຳ ຍັງບໍ່ທັນເຂັ້ມແຂງ ແລະ ບໍ່ທັນ ຕອບສະໜອງຄວາມຕ້ອງການທີ່ ເພີ່ ມຂຶ້ ນ ຂອງການພັດທະນາ ເສດຖະກິດຂອງຊາດ ໃນໄລ ຍະໃໝ່; ຄຸນນະພາບຂອງຊັບພະຍາກອນ ບຸກຄົນ ທີ່ໄດ້ຮັບການກໍ່ສ້າງ, ບຳລຸງຫຼາຍດ້ານຍັງຕ່ຳ ແລະ ບໍ່ທັນພ້ອມ ທີ່ຈະເຂົ້າສູ່ການແຂ່ງຂັນກັບຊາດອື່ນໆ, ແຮງງານລາວຈຳນວນບໍ່ໜ້ອຍ ໃນທຸກລະດັບ ຍັງຂາດໂອ ກາດອັນດີ ເພື່ອເຂົ້າສູ່ຕະຫຼາດແຮງງານກະ ທັ້ງຢູ່ໃນປະເທດຕົນ.

6). ການສ້າງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ສາ ມາດສ້າງໃຫ້ມີຖົນແຖວພະນັກງານ, ນັກຮົບ, ພົນຖານອັດຖ-ເຕັກນິກ ແລະ ລະດັບສີລະປະຍຸດ-ຍຸດທະວິທີ ທີ່ໄດ້ຮັບການຍົກສູງຂຶ້ນເລື້ອຍໆ ແລະ ສືບຕໍ່ມີຄວາມສາມາດຕອບສະໜອງການປະຕິບັດໜ້າທີ່ປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ, ປົກປ້ອງລະບອບການເມືອງ ແລະ ຄວາມ ສະຫງົບສຸກຂອງປະຊາຊົນ. ເຖິງຢ່າງໃດກໍຕາມ, ໃນການ “ສ້າງ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ” ຍັງບໍ່ທັນຮັບປະກັບ ລັກສະນະສືບທອດ, ຕໍ່ເນື່ອງໃນໂຄງປະກອບຖົນແຖວຜູ້ບັງຄັບບັນຊາ ຂອງກຳລັງດັ່ງກ່າວ. ພ້ອມນັ້ນ ຍັງມີຄວາມຈຳເປັນຕ້ອງເພີ່ມການ ສະ ໜອງດ້ານພະລາທິການ ກໍ່ຄືຮັບປະກັນປັດໄຈອື່ນໆ ສຳລັບການສ້າງ ກຳລັງປະ ກອບອາວຸດ ໃຫ້ມີແບບແຜນທັນສະໄໝຢ່າງແທ້ຈິງ.

7). ການສ້າງສະພາບແວດລ້ອມພາຍນອກອັນອານວຍ: ຕະ ຫຼອດຫຼາຍສິບປີຜ່ານມາ ປະເທດເຮົາຢຶດໝັ້ນການເປີດກວ້າງການ ຮ່ວມມືສາກົນຕາມທິດ “ເພີ່ ມມິດ-ຫຼຸດຜ່ອນສັດຕູ” ແລະ ໄດ້ ຂະຫຍາຍສາຍພົວພັນຮ່ວມມື ທັງໃນດ້ານລັດ, ດ້ານພັກ ແລະ ຜ່ານ ອົງການຈັດ ຕັ້ງມະຫາຊົນ ກັບບັນດາປະເທດ ກໍ່ຄືກັບການຈັດຕັ້ງ ສາກົນຢ່າງກວ້າງ ຂວາງ, ເປັນພາຄີອັນຕັ້ງໜ້າຢູ່ໃນຫຼາຍໆອົງການຈັດຕັ້ງ ຮ່ວມມືສາກົນ ແລະ ພາກພື້ນ; ໃນນັ້ນ, ມິດຕະພາບການຮ່ວມມື ແລະ ການສະໜັບສະໜູນຊ່ວຍເຫຼືອຊຶ່ງກັນແລະກັນ ກັບເພື່ອນມິດຍຸດທະ ສາດ ໄດ້ກາຍເປັນບ່ອນອີງອັນແໜ້ນແກ່ນ ໃນການເປີດກວ້າງການ ຮ່ວມມືສາກົນ. ສິ່ງທີ່ຕ້ອງສືບຕໍ່ປັບປຸງແກ້ໄຂ ແມ່ນຄວາມສາມາດ ວິເຄາະສະພາບການ, ການກຳ ແລະ ນຳໃຊ້ການລະໂອກາດ, ເງື່ອນໄຂທີ່ ເອື້ອອຳນວຍຈາກພາຍນອກຍັງຕ່ຳ, ລວມທັງກົນໄກປະສານສົມທົບຢູ່ ພາຍໃນ ທີ່ຍັງບໍ່ທັນເປັນລະ ບົບ, ຮັດກຸມ ແລະ ໜັກແໜ້ນ.

ນອກຈາກນັ້ນ, ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຍັງໄດ້ຕີລາຄາ ໝາກຜົນຢ່າງພາວະວິໄສ ແລະ ສ່ອງແສງຄວາມເປັນຈິງທາງດ້ານການ ເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງ

ກັນຄວາມສະຫງົບ ແລະຕ່າງປະເທດ. ໃນນັ້ນ, ບັນດາຜົນສຳເລັດອັນເປັນພື້ນຖານດັ່ງກ່າວມານັ້ນ ໄດ້ເຮັດໃຫ້ພາລະກິດປະຕິວັດຢູ່ປະເທດເຮົາ ສາ ມາດຍຶດໝັ້ນບັນດາຫຼັກການພື້ນຖານ ຂອງພາລະກິດປ່ຽນແປງໃໝ່ທີ່ພັກວາງອອກ ແລະ ພາປະເທດຊາດກ້າວເດີນຕາມເສັ້ນທາງ ແລະຈຸດໝາຍສັງຄົມນິຍົມ ດ້ວຍຄວາມເຊື່ອໝັ້ນຢ່າງໜັກແໜ້ນ. ແຕ່ພ້ອມກັນນັ້ນ, ຈາກດ້ານທີ່ຍັງຕ້ອງປັບປຸງ, ແກ້ໄຂກໍ່ຊີ້ໃຫ້ພວກເຮົາເຫັນຄວາມຈຳເປັນຕ້ອງສືບຕໍ່ຄົ້ນຄວ້າ, ກຳແໜ້ນ ແລະ ພິຈາລະນາຢ່າງເປັນລະບົບ ເພື່ອເປັນພື້ນຖານໃນການກຳນົດທິດທາງ, ໜ້າທີ່ໃຫຍ່ໆໃນຊຸມປີຕໍ່ໜ້າ ກໍ່ຄືເພື່ອບູລະນະລະບອບປະຊາທິປະໄຕປະຊາ ຊົນ ໃຫ້ສົມບູນຍິ່ງຂຶ້ນ. ສະນັ້ນ, ເພື່ອສືບຕໍ່ເຮັດສຳເລັດພາລະກຳປະ ຫວັດສາດໃນເງື່ອນໄຂໃໝ່ ເພື່ອກ້າວຂຶ້ນສັງຄົມນິຍົມ, ນຳພາທົ່ວປວງຊົນລາວ ປົກປັກຮັກສາປະເທດຊາດໄວ້ໃຫ້ໝັ້ນຄົງ ແລະ ສ້າງສາພັດທະນາໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ສະຖານະພາບປະເທດດ້ອຍພັດທະນາ ຕາມແຜນຍຸດທະສາດທີ່ວາງໄວ້ໃນຊຸມປີສະ ເພາະໜ້າ ພັກເຮົາເຊີດຊູຄວາມສາມາດ ນຳພາຂອງຕົນໃນ 5 ດ້ານດັ່ງນີ້:

1). ຄວາມສາມາດໃນການຮັກສາສະຖານະເປັນແກນນຳໃນລະບົບການເມືອງ ເວົ້າລວມ ແລະໃນການນຳພາລັດ ເວົ້າສະເພາະ ເພື່ອໄດ້ຮັບຄວາມໄວ້ວາງໃຈ ແລະ ຄວາມເຊື່ອໝັ້ນຈາກປະຊາຊົນ.

- ພັກເຮົາຢາກຮັກສາສະຖານະພາບເປັນແກນນຳ ໃນລະບົບການເມືອງ, ກ່ອນອື່ນໝົດ ພັກຕ້ອງຍົກສູງຄວາມສາມາດໃນການວາງແນວທາງ ແລະ ປັບປຸງບູລະນະແນວທາງໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ຂອງປະເທດເຮົາ ໃນແຕ່ລະໄລຍະ. ຢາກວາງແນວທາງ ແລະ ປັບປຸງບູລະນະແນວທາງຂອງພັກ ໃຫ້ຖືກຕ້ອງ, ສອດຄ່ອງ, ພັກຕ້ອງຍົກສູງຄວາມຮູ້-ຄວາມສາມາດກຳແໜ້ນບັນດາຫຼັກມູນພື້ນຖານຂອງທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ກຳແໜ້ນສະພາບຄວາມເປັນຈິງຂອງປະເທດເຮົາ ເພື່ອໝູນໃຊ້ທິດສະດີດັ່ງກ່າວຢ່າງປະດິດສ້າງ.

- ພັກຕ້ອງຍົກສູງຄວາມສາມາດນຳພາວຽກງານບຳລຸງ-ກໍ່ສ້າງ ພະນັກງານ ໂດຍສະເພາະແມ່ນຜູ່ທີ່ເຮັດວຽກຢູ່ບັນດາອົງການຈັດຕັ້ງ ໃນລະບົບການເມືອງ ໃຫ້ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ.

- ຍົກສູງຄວາມສາມາດໃນການນຳພາວຽກງານສຶກສາອົບຮົມ ພະນັກງານ-ສະມາຊິກພັກ ທີ່ເຮັດວຽກໃນບັນດາອົງການຈັດຕັ້ງໃນລະບົບການເມືອງ ໃຫ້ເຊື່ອມຊຶມກຳແໜ້ນແນວທາງຂອງພັກ ແລະ ມີຄວາມຕື່ນຕົວຫ້າວຫັນຈັດຕັ້ງປະຕິບັດ.

- ສະມາຊິກພັກທຸກສະຫາຍ ຕ້ອງຍົກສູງຄວາມສາມາດໃນການເຂົ້າຮ່ວມກິດຈະກຳ ຂອງບັນດາອົງການລັດ ແລະ ມີຄວາມສາມາດນຳພາວຽກງານປັບປຸງກົງຈັກຂອງລັດໃຫ້ປອດໃສ, ເຂັ້ມແຂງເຮັດໃຫ້ລັດເຮົາກາຍເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ຢ່າງແທ້ຈິງ.

- ຍົກສູງຄວາມສາມາດນຳພາວຽກງານຕິດຕາມ, ກວດກາການປະຕິບັດແນວທາງ, ມະຕິຄຳສັ່ງຂອງພັກ ໂດຍຜ່ານການເຄື່ອນໄຫວຂອງອົງການຈັດຕັ້ງພັກ ແລະ ບັນດາສະມາຊິກພັກທີ່ເຮັດວຽກຢູ່ໃນບັນດາອົງການຂອງລັດ.

- ຍົກສູງຄວາມສາມາດເປັນແບບຢ່າງນຳໜ້າທີ່ດີໃນທຸກດ້ານ ຂອງສະມາຊິກພັກ ທີ່ເຮັດວຽກຢູ່ໃນບັນດາອົງການຈັດຕັ້ງໃນລະບົບການເມືອງ.

2). ຄວາມສາມາດໃນການນຳພາແກ້ໄຂຄວາມທຸກຍາກ, ບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ແລະ ພາປະເທດຊາດຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ.

- ການນຳພາແກ້ໄຂຄວາມທຸກຍາກຂອງປະຊາຊົນ ແມ່ນຄວາມມຸ່ງຫວັງປາຖະໜາອັນແຮງກ້າຂອງປະຊາຊົນ, ແມ່ນໜ້າທີ່ຍຸດທະສາດ, ແມ່ນໜ້າທີ່ອັນຫຍຸ້ງຍາກສັບສົນ ແຕ່ມີກຽດສະຫງ່າຂອງພັກ; ຢາກນຳພາແກ້ໄຂຄວາມທຸກຍາກ, ບັນຫາສຳຄັນ ພັກຕ້ອງເພີ່ມທະວີວຽກງານປັບປຸງ-ກໍ່ສ້າງພັກ ໂດຍສະພາະແມ່ນ ສ້າງໜ່ວຍພັກຮາກຖານບ້ານປອດໃສ, ເຂັ້ມແຂງ, ໜັກແໜ້ນ ເພື່ອສາມາດເປັນຫຼັກແຫຼ່ງແກ່ນສານນຳພາປະຊາຊົນພັດທະນາ ໃຫ້ບັນລຸຕາມແນວທາງຂອງພັກວາງອອກ.

- ຍົກສູງຄວາມສາມາດນຳພາ ຂອງຄະນະໜ່ວຍພັກຮາກຖານບ້ານໃນການປັບປຸງອຳນາດການປົກຄອງໃຫ້ເຂັ້ມແຂງ ເພື່ອບໍລິຫານຄຸ້ມຄອງຄອງ ກໍ່ຄືຮັບໃຊ້ປະຊາຊົນເປັນຢ່າງດີ ແລະ ເຮັດໃຫ້ບ້ານມີຄວາມສະຫງົບປອດໄພສ້າງຄວາມອຸ່ນອ່ຽນໃຫ້ແກ່ປະຊາຊົນ ໃນການທຳມາຫາກິນ.

- ເພີ່ມທະວີການນຳພາວຽກງານສຶກສາອົບຮົມປະຊາຊົນ ໂດຍສະເພາະແມ່ນຜູ້ທຸກຍາກໃຫ້ເຂົ້າໃຈເຖິງສາເຫດ, ໄພອັນຕະລາຍ ແລະ ທິດທາງ. ມາດຕະການແກ້ໄຂຄວາມທຸກຍາກທີ່ພັກວາງອອກ ຕິດພັນກັບການໃຫ້ຄວາມຮູ້ ກ່ຽວກັບການປູກ, ການລ້ຽງ, ການບໍລິການແກ່ປະຊາຊົນ ເພື່ອສ້າງຄວາມຕື່ນຕົວຫ້າວຫັນ ໃນການຜະລິດເປັນສິນຄ້າ ໃຫ້ນັບມື້ເປັນຂະບວນການກ້ວາງຂວາງ.

- ຍົກສູງຄວາມສາມາດນຳພາວຽກງານສ້າງ ແລະ ປັບປຸງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມ ໃຫ້ກ້ວ້າງຂວາງ, ທົ່ວເຖິງ ເພື່ອອຳນວຍຄວາມສະດວກໃຫ້ແກ່ປະຊາຊົນໃນການພັດທະນາ.

3). ຄວາມສາມາດນຳພາການຄຸ້ມຄອງດັດສົມ ແລະ ນຳໃຊ້ກົນໄກເສດຖະກິດຕະຫຼາດ ໃຫ້ເສີມຂະຫຍາຍໄດ້ດ້ານຕັ້ງໜ້າ ແລະ ຈຳກັດແຮງສັ່ງລວມເຂົ້າໃນການພັດທະນາ ກໍ່ຄືຊຸກຍູ້ການເຕີບໂຕໃຫ້ມີຄວາມຕໍ່ເນື່ອງ, ມີຄຸນນະພາບ ແລະ ໄປຕາມທິດຍືນຍົງ.

-ເພື່ອນຳພາເສີມຂະຫຍາຍດ້ານຕັ້ງໜ້າ ແລະ ຈຳກັດດ້ານຫຍໍ້ທໍ້ຂອງກົນໄກເສດຖະກິດຕະຫຼາດໄດ້ດີ, ກ່ອນອື່ນໝົດ. ຄະນະພັກທຸກຂັ້ນ, ຕະຫຼອດຮອດສະມາຊິກພັກທຸກສະຫາຍ ຕ້ອງຍົກສູງຄວາມຮັບຮູ້-ເຂົ້າໃຈເຖິງທາດແທ້ຂອງເສດຖະກິດຕະຫຼາດ; ກຳແໜ້ນແນວທາງຂອງພັກ ກ່ຽວກັບການດຳເນີນເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ຢ່າງຖືກຕ້ອງ ແລະ ມີຄວາມເປັນເອກະພາບສູງທາງດ້ານຄວາມຮັບຮູ້ກັບພຶດຕິກຳ.

- ຍົກສູງຄວາມສາມາດໃນການນຳພາອົງການລັດ ໃນການຫັນເອົາແນວທາງພັກ ມາເປັນລະບຽບກົດໝາຍ ໃຫ້ນັບມື້ເປັນລະບົບຄົບຖ້ວນ ແລະ ຮັດກຸມ ເພື່ອເປັນເຄື່ອງມືອັນສັກສິດໃນການຄຸ້ມຄອງ-ດັດສົມເສດຖະກິດຕະຫຼາດ ໃຫ້ໄປຕາມທິດສັງຄົມນິຍົມ.

- ເພີ່ມທະວີການນຳພາວຽກງານບຳລຸງ-ກໍ່ສ້າງພະນັກງານ ໂດຍສະເພາະແມ່ນພະນັກງານຄຸ້ມຄອງມະຫາພາກ ໃຫ້ຮັບປະກັນທັງທາງດ້ານປະລິມານ ແລະ ຄຸນນະພາບ.

- ຍົກສູງຄວາມສາມາດນຳພາ ວຽກງານພົວພັນຮ່ວມມືທາງດ້ານເສດຖະກິດກັບຕ່າງປະເທດ ໃຫ້ນັບມື້ກ້ວ້າງຂວາງ ໂດຍສະເພາະແມ່ນເອົາໃຈໃສ່ຖອດຖອນບົດຮຽນນຳບັນດາປະເທດສັງຄົມນິຍົມອ້າຍນ້ອງ ແລະ ເລືອກເຟັ້ນເອົາບົດຮຽນອັນຍອດຍິ່ງຂອງໂລກ ມາໝູນໃຊ້ຢູ່ປະເທດເຮົາຢ່າງປະດິດສ້າງ.

4). ຄວາມສາມາດ ໃນການສ້າງສັງຄົມສາມັກຄີປອງດອງ, ສ້າງຄວາມເປັນປຶກແຜ່ນໃນທົ່ວປວງຊົນໃຫ້ໜັກແໜ້ນ.

- ຢາກສ້າງຄວາມສາມັກຄີປອງດອງ ແລະ ຄວາມເປັນປຶກແຜ່ນໃນທົ່ວປວງຊົນໄດ້, ກ່ອນອື່ນໝົດ ພັກເຮົາຕ້ອງຕັ້ງໜ້າປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອສາມັກຄີບັນດາເຜົ່າ; ສະມາຊິກພັກທຸກສະຫາຍ ຕ້ອງຍົກສູງຄວາມສາມາດເປັນຕົວແທນທີ່ຈົ່ງຮັກພັກດີ ຕໍ່ຜົນປະໂຫຍດອັນຖືກຕ້ອງ, ຊອບທຳຂອງປະຊາຊົນບັນດາເຜົ່າ ດ້ວຍການເຄື່ອນໄຫວຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດ ແລະ ຍາມໃດກໍ່ຖືເອົາຜົນປະໂຫຍດ (ຄວາມຢູ່ດີກິນດີ) ຂອງປະຊາຊົນເປັນກົກ ແລະ ເປັນເປົ້າໝາຍໃນການນຳໃຊ້ຂອງຕົນ.

- ຍົກສູງຄວາມສາມາດໃນການຫັນເອົາພະນັກງານລົງສູ່ຮາກຖານ ໄປຄຽງຄູ່ກັບການທຶນລົງກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດຮອບດ້ານ ໂດຍສະເພາະແມ່ນການສ້າງບ້ານເປັນຫົວໜ່ວຍພັດທະນາໃຫ້ນັບມື້ກ້ວ້າງຂວາງ.

-ເພີ່ມທະວີຄວາມສາມາດນຳພາວຽກງານຊົນເຜົ່າ ໂດຍສຸມໃສ່ສຶກສາອົບຮົມປະຊາຊົນບັນດາເຜົ່າ ໃຫ້ເຄົາລົບ ແລະ ປະຕິບັດສິດສະເໝີພາບ ລະຫວ່າງເຜົ່າ; ຮັກຫອມຕອມຕຸ້ມ ແລະ ມີຄວາມຈິງໃຈຊ່ວຍເຫຼືອເກື້ອກູນກັນ.

- ຍົກສູງຄວາມສາມາດໃນການນຳພາ ວຽກງານສຶກສາອົບຮົມປະຊາຊົນບັນດາເຜົ່າ ໃຫ້ມີສະຕິລະວັງຕົວ ຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິ ຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີໃນການມ້າງເພ, ທຳລາຍຄວາມສາມັກຄີບັນດາເຜົ່າ ໂດຍສຸມໃສ່ກຳແໜ້ນ ແລະ ນຳໃຊ້ຜູ້ທີ່ເປັນຫົວໜ້າຊົງຊາວ, ເປັນຫຼັກແຫຼ່ງຢູ່ແຕ່ລະເຜົ່າ ເຂົ້າໃນການສຶກສາອົບຮົມ, ນຳພາແນວຄິດຂອງລູກຫຼານໃນເຜົ່າຂອງຕົນ.

5). ຄວາມສາມາດໃນການເປີດກວ້າງການພົວພັນຮ່ວມມື ກັບພາຍນອກ ແລະ ການເຊື່ອມໂຍງໃຫ້ໄດ້ຢ່າງຕັ້ງໜ້າ, ສາມາດຮັບມືກັບຜົນກະທົບ ແລະ ການຫັນປ່ຽນໂດຍສັນຕິ.

- ຢາກພົວພັນຮ່ວມມືກັບພາຍນອກໄດ້ຢ່າງກວ້າງຂວາງ ແລະ ເຊື່ອມໂຍງກັບສາກົນໄດ້ຢ່າງຕັ້ງໜ້າ, ອັນສຳຄັນກວ່າໝູ່, ພັກຕ້ອງຍົກສູງຄວາມສາມາດໃນການນຳພາວຽກງານສຶກສາອົບຮົມ ໃຫ້ຖັນແຖວພະນັກງານ-ສະມາຊິກພັກ ເຊື່ອມຊຶມ ແລະ ກຳແໜ້ນແນວທາງນະໂຍບາຍຕ່າງປະເທດຂອງພັກເຮົາ; ກຳແໜ້ນບັນດາຫຼັກການພົວພັນຮ່ວມມືສາກົນ; ກຳແໜ້ນສະພາບການພາກພື້ນ ແລະ ສາກົນເປັນປົກກະຕິເພື່ອວາງ ແລະ ປັບປຸງແນວທາງການຕ່າງປະເທດ ຂອງພວກເຮົາໃຫ້ຖືກຕ້ອງ ແລະ ສອດຄ່ອງຢູ່ສະເໝີ.

- ຍົກສູງຄວາມສາມາດໃນການບຳລຸງ-ກໍ່ສ້າງຖັນແຖວພະນັກງານ-ສະມາຊິກພັກ ທີ່ເຮັດວຽກຢູ່ໃນຂົງເຂດພົວພັນຕ່າງປະເທດ ໃຫ້ຮັບປະກັນທັງທາງດ້ານປະລິມານ ແລະ ຄຸນນະພາບ. ໃນຕໍ່ໜ້ານີ້, ຕ້ອງເອົາໃຈໃສ່ຍົກສູງປະສິດທິຜົນ ໃນການພົວພັນຮ່ວມມືກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ.

- ເພີ່ມທະວີການນຳພາເດັດຂາດ, ໂດຍກົງ ແລະ ຮອບດ້ານ ຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍສຸມໃສ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານຢ່າງແຂງແຮງ ແລະ ກ້ວ້າງຂວາງ ເພື່ອເຮັດໃຫ້ສັງຄົມມີຄວາມສະຫງົບ, ປອດໄພຢ່າງໜັກແໜ້ນ ສ້າງຄວາມອຸ່ນອ່ຽນ ແລະ ຄວາມໝັ້ນໃຈໃຫ້ແກ່ຕ່າງຊາດ ໃນການພົວພັນຮ່ວມມືກັນ.

ສັງລວມແລ້ວ, ພັກປະຊາຊົນລາວກຳອຳນາດ ສືບຕໍ່ປະຕິບັດພາລະກິດປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການ, ໄດ້ເຊີດຊູຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງພັກ ຕະຫຼອດໄລຍະທີ່ພັກເຮົາ

ນຳພາ-ຊີ້ນຳອຳນາດລັດ ໄດ້ສ້າງຄວາມເຂັ້ມແຂງໃຫ້ການປະຕິວັດ ຂອງປະເທດເຮົາ, ພວກເຮົາມີຄວາມພາກພູມໃຈທີ່ເຫັນໄດ້ວ່າ ພັກ ເຮົາເວລາໃດກໍ່ເປັນກອງນຳໜ້າທີ່ມີການຈັດຕັ້ງເຂັ້ມແຂງ, ສະຫຼາດ ສ່ອງໃສ, ເປັນຕົວແທນທີ່ຈົງຮັກພັກດີຕໍ່ສິດ ແລະ ຜົນປະໂຫຍດ ຂອງຊົນຊັ້ນກຳມະ ກອນ, ຊາວຜູ້ອອກແຮງງານລາວທີ່ຮັກຊາດ ແລະ ຂອງປະຊາຊົນທົ່ວທັງຊາດ, ເປັນແກນນຳໃນລະບົບການເມືອງ ລະບອບປະຊາທິປະໄຕປະຊາຊົນ, ເປັນອົງການຈັດຕັ້ງການເມືອງສູງ ສຸດ ຂອງຊົນຊັ້ນກຳມະ ກອນ ທີ່ສາມາດປະຕິບັດພາລະກິດເປັນພັກ ກຳອຳນາດ ນຳພາປວງຊົນລາວທັງຊາດ ປະຕິບັດສອງໜ້າທີ່ຍຸດທະ ສາດ ຄື: ປົກປັກຮັກສາປະເທດຊາດ ແລະ ສ້າງໝາກຜົນຂອງການ ປະຕິວັດໄວ້ໃຫ້ໝັ້ນຄົງ; ສ້າງ ແລະ ບູລະນະລະບອບປະຊາທິປະໄຕ ປະຊາຊົນ ຕາມຈຸດໝາຍສັງ ຄົມນິຍົມ ສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ເອກະສານອ້າງອີງ

ຄະນະໂຄສະນາອົບຮົມສູນກາງພັກ. (1997). *ປຶ້ມປະຫວັດສາດ ພັກປະຊາຊົນປະຕິວັດລາວ.*

ວະລາດີເມຍ ອີລິດ, ລ. (1977). *ນິພົນຄົບຊຸດ ເຫຼັ້ມ 44*, ສຳນັກ ພິມ ມົດສ໌ກູ.

ວາລະສານວາລຸນໃໝ່. (2011). *ເອກະສານກອງປະຊຸມໃຫຍ່ ຄັ້ງ ທີ IX ພັກປະຊາຊົນປະຕິວັດລາວ*, ສຳນັກພິມ ໂຮງພິມ ແຫ່ງລັດ.